Empowered lives.
Resilient nations.

# <u>ບົດອອກຂ່າວ</u>

## ການເຂົ້າຢ້ຽມຄຳນັບ ພະນະທ່ານ ຈູມມະລີ ໄຊຍະສອນ, ປະທານປະເທດ ແຫ່ງ ສປປ ລາວ ເພື່ອລາຍງານ ກ່ຽວກັບ ຜົນຂອງກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11

### ວັນທີ 20 ພະຈິກ 2013, ນະຄອນຫຼວງວຽງຈັນ, ສປປ ລາວ

ພາຍຫຼັງກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ທີ່ໄດ້ຈັດຂຶ້ນໃນວັນທີ 19 ພະຈິກ 2013 ພາຍໃຕ້ຫົວຂໍ້: ‘‘ເລັ່ງລັດການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ການພັດທະນາແບບສົມສ່ວນທີ່ມີສ່ວນຮ່ວມ’’ ໄດ້ສຳເລັດລົງຢ່າງເປັນທາງການ, ມາໃນຕອນເຊົ້າຂອງວັນທີ 20 ພະຈິກ 2013, ຢູ່ທີ່ ຫ້ອງວ່າການສຳນັກງານປະທານປະເທດ, ບັນດາຄະນະຜູ້ແທນຕ່າງປະເທດທີ່ເຂົ້າຮ່ວມກອງປະຊຸມໂຕະມົນລະດັບສູງ ຈຳນວນໜຶ່ງ ເຊິ່ງນຳພາໂດຍ ທ່ານ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໄດ້ເຂົ້າຢ້ຽມຄຳນັບ ພະນະທ່ານ ຈູມມະລີ ໄຊຍະສອນ, ປະທານປະເທດແຫ່ງ ສປປ ລາວ, ເພື່ອລາຍງານ ກ່ຽວກັບ ຜົນຂອງກອງປະຊຸມໂຕະມົນລະດັບສູງດັ່ງກ່າວ ໃຫ້ພະນະທ່ານໄດ້ຮັບຊາບ ແລະ ມີທິດຊີ້ນຳສຳລັບທິດທາງໃນຕໍ່ໜ້າ. ຄະນະຜູ້ແທນທີ່ເຂົ້າຢ້ຽມຂໍ່ານັບ ພະນະທ່ານປະທານປະເທດ ໃນຄັ້ງນີ້ ປະກອບມີ 14 ທ່ານ (ຈາກພາກສ່ວນ: ອົງການ ສປຊ ເພື່ອການພັດທະນາ, ທະນາຄານພັດທະນາອາຊີ, ສະຫະລັດອາເມລິກາ, ລຸກຊຳບວກ, ສະຫະພາບເອີຣົບ, ອິດສະຕາລີ, ຝຣັ່ງ, ເຢຍລະມັນ, ທະນາຄານໂລກ, ບູໄນ, ສ.ປ ຈີນ, ຍີ່ປຸ່ນ ແລະ ສ.ສ. ຫວຽດນາມ).

ໃນໂອກາດດັ່ງກ່າວ, ພະນະທ່ານ ຈູມມາລີ ໄຊຍະສອນ, ປະທານປະເທດແຫ່ງ ສປປ ລາວ ກໍ່ໄດ້ໃຫ້ກຽດຕ້ອນຮັບຄະນະຜູ້ແທນທີ່ເຂົ້າຢ້ຽມຂໍ່ານັບຢ່າງອົບອຸ່ນ, ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການມາເຂົ້າຮ່ວມກອງປະຊຸມໂຕະມົນໃນຄັ້ງນີ້ຂອງບັນດາຄະນະຜູ້ແທນຕ່າງປະເທດ ໂດຍສະເພາະແມ່ນ ທ່ານ ຮ່າວລ່ຽງ ຊູ, ຜູ້ຊ່ວຍເລຂາທິການໃຫຍ່ອົງການສະຫະປະຊາຊາດ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ ອົງການສະຫະປະຊາຊາດເພື່ອການພັດທະນາ ທັງເປັນເອກອະທິບໍດີ ຮັບຜິດຊອບພາກ ພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ສະແດງຄວາມຊົມເຊີຍ ຕໍ່ຜົນສຳເລັດຂອງ ກອງປະຊຸມໃນຄັ້ງນີ້.

ຄະນະຜູ້ແທນ ກໍ່ໄດ້ລາຍງານໝາກຜົນຂອງກອງປະຊຸມໂດຍສັງເຂບ ຕໍ່ ພະນະທ່ານປະທານປະເທດ ເຊິ່ງສັງລວມປະເດັນສຳຄັນ ໄດ້ດັ່ງນີ້:

ບັນດາຄູ່ຮ່ວມພັດທະນາ ສະແດງຄວາມຊົມເຊີຍ ຕໍ່ຜົນສຳເລັດຂອງລັດຖະບານໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຫ້າປີ ຄັ້ງທີ 7 2011-2015 ລວມທັງເປົ້າໝາຍສະຫັດ ສະຫວັດດ້ານການພັດທະນາ

ເຊິ່ງສະແດງອອກຢູ່ໃນບົດລາຍງານສະຫຼຸບກາງສະໄໝ ແລະ ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍສະຫັດ ສະຫວັດດ້ານການພັດທະນາແຫ່ງຊາດ ທີ່ອທີ 3. ຄະນະຜູ້ແທນຍັງໄດ້ຕີລາຄາສູງຕໍ່ການເຂົ້າຮ່ວມກອງປະຊຸມຄັ້ງນີ້ຢ່າງພ້ອມພຽງຈາກທຸກພາກສ່ວນ ລວມທັງຈາກອົງການຈັດຕັ້ງທາງສັງຄົມ.

ກອງປະຊຸມ ຍັງໄດ້ສະເໜີໃຫ້ເອົາໃຈໃສ່ ກ່ຽວກັບ ການຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກເພື່ອຮັບປະກັນໃຫ້ແກ່ການຂະຫຍາຍຕົວເສດຖະກິດທີ່ໝັ້ນທ່ຽງ ແລະ ບັນລຸໄດ້ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ເຊິ່ງຕ້ອງເລັ່ງໃສ່ຂົງເຂດທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ລວມທັງແມ່ຍິງ, ເດັກນ້ອຍ ແລະ ບັນດາຊົນເຜົ່າທີ່ຢູ່ຫ່າງໄກສອກຫຼີກ ໂດຍຜ່ານການຈັດລຽງບູລິມະສິດບັນດາເປົ້າໝາຍ ສະຫັດສະຫວັດທີ່ບໍ່ທັນບັນລຸໄດ້ພ້ອມທັງເລັ່ງໃສ່ ຄວາມສະເໝີພາບເປັນບຸລິມະສິດສຳຄັນ ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມໃນຊຸດຕໍ່ໄປ; ການນຳໃຊ້ຫຼັກການກ່ຽວກັບຄວາມໂປ່ງໃສຂອງຂະແໜງການຂຸດຄົ້ນ; ການຫັນເສດຖະກິດໃຫ້ທັນສະໄໝ; ການສຸມໃສ່ພັດທະນາພາກເອກະຊົນ ແລະ ທຸລະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະຢູ່ເຂດຊົນນະບົດ ແລະ ຂົງເຂດອື່ນໆທີ່ມີຄວາມເໝາະສົມ; ບັນດາຄູ່ຮ່ວມພັດທະນາ ເຫັນດີຈະສືບຕໍ່ໃຫ້ການສະໜັບສະໜູນ ແກ່ ສປປ ລາວ ລວມທັງການສ້າງມາດຕະຖານປ້ອງກັນທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ແລະ ຈະເຂົ້າຮ່ວມກັບລັດຖະບານເພື່ອສົ່ງເສີມວຽກງານອາຊີວະສຶກສາ ແລະ ການພັດທະນາສີມືແຮງງານໃນຂະແໜງອຸດສະຫະກຳ ແລະ ການບໍລິການ; ຕໍ່ເປົ້າໝາຍMDG ທີ່ 1 ກ່ຽວກັບການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ບັນດາຄູ່ຮ່ວມພັດທະນາເຫັນດີເປັນເອກະພາບ ຕໍ່ທິດທາງຂອງລັດຖະບານ ໃນການສ້າງແຜນດຳເນີນງານທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການເພື່ອແກ້ໄຂບັນຫາການຂາດສານອາຫານ; ເປົ້າໝາຍ MDG 2 ດ້ານການສຶກສາ, ລັດຖະບານ ແລະ ຄູ່ຮ່ວມພັດທະນາຈະສືບຕໍ່ແກ້ໄຂບັນຫາຢູ່ໃນຂົງເຂດດັ່ງກ່າວຢ່າງມີປະສິດທິຜົນ; ເປົ້າໝາຍ MDG 7, ລັດຖະບານ ຈະສືບຕໍ່ປະຕິບັດມາດຕະການຢ່າງເຂັ້ມງວດ ເພື່ອຫຼຸດຜ່ອນການຕັດໄມ້ແບບຜິດກົດໝາຍ; ສະເໜີໃຫ້ມີການສະໜັບສະໜູນບົດບາດຂອງສະພາແຫ່ງຊາດ ໃນການພັດທະນານະໂຍບາຍກ່ຽວກັບທີ່ດິນ ແລະ ຊຸກຍູ້ໃຫ້ມີການປຶກສາຫາລືກັນຫຼາຍຂຶ້ນກ່ຽວກັບປະເດັນດັ່ງກ່າວ; ວຽກງານເກັບກູ້ລະເບີດ, ຄູ່ຮ່ວມພັດທະນາ ຍິນດີຕໍ່ຍຸດທະສາດແຫ່ງຊາດຂອງ ສປປ ລາວ ໃນການເຮັດການສຳຫຼວດ ເພື່ອເກັບກູ້ລະເບີດທີ່ບໍ່ທັນແຕກ ເພື່ອໃຫ້ບັນລຸຕາມແຜນການ; ສະເໜີໃຫ້ມີການປະກອບສ່ວນເຂົ້າໃນການພັດທະນາ ຂອງບັນດາອົງການຈັດຕັ້ງທາງສັງຄົມ ແລະ ອົງການເຄືອຂ່າຍ INGO ແລະ ສະເໜີໃຫ້ມີການສ້າງຕັ້ງກົນໄກປຶກສາຫາລື ເພື່ອຕິດຕາມຜົນຢ່າງເປັນປົກກະຕິ. ບັນດາຄູ່ຮ່ວມພັດທະນາຍັງໄດ້ຊົມເຊີຍຜົນສຳເລັດໃນການເປີດການນຳໃຊ້ລະບົບສະແດງຂໍ້ມູນການຊ່ວຍເຫຼືອເພື່ອການພັດທະນາແບບອອນໄລ ເຊິ່ງຖືເປັນບາດກ້າວສຳຄັນໃນການປັບປຸງການເຂົ້າເຖິງຂໍ້ມູນ.

ໂດຍຕາງໜ້າໃຫ້ແກ່ ລັດຖະບານ ສປປ ລາວ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດ, ພະນະທ່ານປະທານປະເທດ ກໍ່ໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ຕໍ່ກັບການສະໜັບສະໜູນຊ່ວຍເຫຼືອທາງດ້ານທຶນຮອນ ກໍ່ຄືດ້ານວິຊາການ ໂດຍສະເພາະ ການຊ່ວຍເຫຼືອທາງການເພື່ອການພັດທະນາ ‘‘ODA’’ ຂອງບັນດາຄູ່ຮ່ວມພັດທະນາຕ່າງໆ ໃຫ້ແກ່ ສປປ ລາວ ໃນໄລຍະຜ່ານມາ ກໍ່ຄືໃນປະຈຸບັນ ແລະ ອະນາຄົດ, ເຊິ່ງການຊ່ວຍເຫຼືອດັ່ງກ່າວ ແມ່ນເປັນພາກສ່ວນໜຶ່ງທີ່ສຳຄັນ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ໂດຍສະເພາະ ການຈັດຕັ້ງປະຕິບັດບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ 7 ແລະ ການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ຂອງ ສປປ ລາວ.

ສຳລັບໝາກຜົນຂອງກອງປະຊຸມໂຕະມົນໃນຄັ້ງນີ້, ພະນະທ່ານ ປະທານປະເທດ ກໍ່ໄດ້ຍ້ອງຍໍຊົມເຊີຍຕໍ່ການເອົາໃຈໃສ່ຊີ້ນຳ-ນຳພາຂອງຄະນະນຳຂັ້ນຕ່າງໆ ຂອງບັນດາກະຊວງຂະແໜງການ ທີ່ເຮັດໃຫ້ກອງປະຊຸມຄັ້ງນີ້ເກີດຂຶ້ນ ແລະ ມີຜົນສຳເລັດຢ່າງໜ້າເພິ່ງພໍໃຈ; ໃນນີ້ ທ່ານຍັງໄດ້ໃຫ້ທິດຊີ້ນຳ ກ່ຽວກັບ ການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມດັ່ງກ່າວ ລວມທັງການປະຕິບັດວຽກງານຂອງພາກສ່ວນຕ່າງໆ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີປະສິດທິຜົນດີຍິ່ງໆຂຶ້ນ.

-----------------------------